ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 189/ສສກ

ນະຄອນຫຼວງວຽງຈັນ, ວັນທີ 2 ມີນາ 2026

# ຂໍ້ຕົກລົງ
# ວ່າດ້ວຍການສ້າງເມືອງ, ນະຄອນ
# ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ

- ອີງຕາມ ກົດໝາຍວ່າດ້ວຍກິລາ-ກາຍຍະກຳ (ສະບັບປັບປຸງ) ເລກທີ 74/ສພຊ, ລົງວັນທີ 25 ພະຈິກ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ສະບັບເລກທີ 1049/ກພສ, ລົງວັນທີ 5 ທັນວາ 2025.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນວຽກງານການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມເປັນເອກະພາບ, ຂະບວນຟົດຟື້ນ, ລະບົບຕໍ່ເນື່ອງ ແລະ ມີຄຸນນະພາບ, ແນໃສ່ເສີມສ້າງບັນຍາກາດທີ່ສົດໃສໃນສັງຄົມ ເຮັດໃຫ້ພົນລະເມືອງລາວມີສຸຂະພາບແຂງແຮງທາງດ້ານຮ່າງກາຍ ແລະ ຈິດໃຈ, ເປັນການເຕົ້າໂຮມຄວາມສາມັກຄີຂອງປວງຊົນລາວບັນດາຊົນເຜົ່າ, ປະກອບສ່ວນເຂົ້າໃນການພັດທະນາ ຊັບພະຍາກອນມະນຸດ ແລະ ເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ

ການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ແມ່ນຂະບວນການຄັດເລືອກເອົາບັນດາເມືອງ, ນະຄອນ ທີ່ຄົບຖ້ວນຕາມເງື່ອນໄຂ ແລະ ມາດຕະຖານໂດຍຜ່ານວິທີການ ແລະ ຂັ້ນຕອນການປະເມີນຜົນ ທີ່ກຳນົດໄວ້.

**ມາດຕາ 3 ຫຼັກການກ່ຽວກັບການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ**

ການເຄື່ອນໄຫວວຽກງານການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ໃຫ້ປະຕິບັດ ຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ, ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ຍຸດທະສາດການພັດທະນາກິລາ-ກາຍຍະກຳ ໃນແຕ່ລະໄລຍະ;
2. ຮັບປະກັນໃຫ້ມວນຊົນທຸກເພດທຸກໄວໃຫ້ເຂົ້າເຖິງກິລາ-ກາຍຍະກຳມວນຊົນ;
3. ຮັບປະກັນ ຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
4. ຮັບປະກັນຄວາມສະຫງົບ, ປອດໄພ, ຄວາມສາມັກຄີ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ມີສ່ວນຮ່ວມຂອງປະຊາຊົນໃນສັງຄົມ;
5. ສົ່ງເສີມ ການອະນຸຮັກ, ປົກປັກຮັກສາສິ່ງແວດລ້ອມ, ທຳມະຊາດ, ວັດທະນະທຳ, ການທ່ອງທ່ຽວ ແລະ ຄວາມສວຍງາມຂອງຕົວເມືອງ, ນະຄອນ ຕາມທິດສີຂຽວແບບຍືນຍົງ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານ ການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ເງື່ອນໄຂ ແລະ ມາດຕະຖານ

**ມາດຕາ 5 ເງື່ອນໄຂ ແລະ ມາດຕະຖານການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະ ກຳມວນຊົນ**

ເງື່ອນໄຂ ແລະ ມາດຕະຖານການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ມີ ດັ່ງນີ້:

1. ເງື່ອນໄຂດ້ານໂຄງລ່າງພື້ນຖານກິລາ-ກາຍຍະກຳມວນຊົນ;
2. ບຸກຄະລາກອນ;
3. ການຈັດຕັ້ງກິລາ-ກາຍຍະກຳທາງສັງຄົມ.

**ມາດຕາ 6 ເງື່ອນໄຂດ້ານໂຄງລ່າງພື້ນຖານກິລາ-ກາຍຍະກຳມວນຊົນ**

ເງື່ອນໄຂດ້ານໂຄງລ່າງພື້ນຖານກິລາ-ກາຍຍະກຳມວນຊົນ ມີ ດັ່ງນີ້:

1. ສະຖານການສຶກສາທີ່ສາມາດຈັດການແຂ່ງຂັນກິລາ-ກາຍຍະກຳມວນຊົນ;
2. ສະໂມສອນກິລາ-ກາຍຍະກຳ;
3. ສະຖານທີ່ຝຶກແອບ, ຝຶກຊ້ອມ, ສະແດງ ແລະ ແຂ່ງຂັນ;
4. ສະຖານທີ່ບໍລິການກິລາ-ກາຍຍະກຳ.

ມາດຕາ 7 ເງື່ອນໄຂດ້ານບຸກຄະລາກອນ

ເງື່ອນໄຂດ້ານບຸກຄະລາກອນ ມີ ດັ່ງນີ້:

**7.1 ບຸກຄະລາກອນກິລາ-ກາຍຍະກຳ.**

1. ຜູ້ທີ່ມີທັດສະນະຫຼັກໝັ້ນທາງດ້ານການເມືອງແນວຄິດດີ, ມີຄຸນສົມບັດ, ມີຈັນຍາບັນ ແລະ ມີສຸຂະພາບແຂງແຮງ;

2. ມີຄວາມຮູ້, ຄວາມສາມາດ, ມີຄວາມເຂົ້າໃຈ ດ້ານການບໍລິຫານວຽກງານກິລາ-ກາຍຍະກຳມວນຊົນ;

3. ຈົບວິຊາສະເພາະດ້ານພະລະສຶກສາ ຫຼື ຜູ້ທີ່ໄດ້ຮັບການຝຶກອົບຮົມດ້ານການບໍລິຫານຄຸ້ມຄອງກິລາ.

**7.2 ກຳມະການຕັດສິນ**

1. ມີທັດສະນະຫຼັກໝັ້ນທາງດ້ານການເມືອງແນວຄິດດີ, ມີຄຸນສົມບັດ, ມີຈັນຍາບັນ ແລະ ມີສຸຂະພາບແຂງແຮງ;

2. ເຄົາລົບລະບຽບກົດໝາຍ ແລະ ມີຄວາມຮູ້ຄວາມສາມາດ ມີປະສົບການ ກຳແໜ້ນທາງດ້ານກົດລະບຽບກະຕິກາໃນການແຂ່ງຂັນ;

3. ມີໃບປະກາສະນີຍະບັດ ຈົບພະລະສຶກສາຊັ້ນສູງຂຶ້ນໄປ ແລະ ມີໃບຢັ້ງຢືນການຝຶກອົບຮົມວຽກງານກິລາໃນຂັ້ນຕ່າງໆ ຫຼື ມີປະສົບການທາງດ້ານວຽກງານກິລາ-ກາຍຍະກຳ;

4. ກຳມະການຕັດສິນ ຜູ້ໜຶ່ງສາມາດຕັດສິນໄດ້ 2 ປະເພດກິລາຂຶ້ນໄປ.

**7.3 ຄູຝຶກ**

1. ມີທັດສະນະຫຼັກໝັ້ນທາງດ້ານການເມືອງແນວຄິດດີ, ມີຄຸນສົມບັດ, ມີຈັນຍາບັນ ແລະ ມີສຸຂະພາບແຂງແຮງ;

2. ເຄົາລົບລະບຽບກົດໝາຍກຳແໜ້ນທາງດ້ານກົດລະບຽບກະຕິກາໃນການແຂ່ງຂັນ ແລະ ມີຄວາມຮູ້, ຄວາມສາມາດ ເປັນຄູຝຶກ ກິລາປະເພດຕ່າງໆ ຢ່າງໜ້ອຍ 2 ປະເພດຂຶ້ນໄປ;

3. ມີໃບປະກາສະນີຍະບັດ ຈົບພະລະສຶກສາຊັ້ນສູງຂຶ້ນໄປ ແລະ ມີໃບຢັ້ງຢືນການຝຶກອົບຮົມວຽກງານກິລາໃນຂັ້ນຕ່າງໆ ຫຼື ມີປະສົບການທາງດ້ານວຽກງານກິລາ-ກາຍຍະກຳ;

4. ສາມາດນຳພານັກກິລາເຂົ້າຮ່ວມການເຄື່ອນໄຫວກິດຈະກຳ ການແຂ່ງຂັນກິລາປະເພດຕ່າງໆ.

**7.4 ນັກກິລາ**

1. ມີທັດສະນະຫຼັກໝັ້ນ ມີຄຸນສົມບັດ ມີຈັນຍາບັນ ແລະ ມີສຸຂະພາບແຂງແຮງ;

2. ເຄົາລົບ, ປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບຄວາມເປັນລະບຽບຮຽບຮ້ອຍ ແລະ ປະກົດການຫຍໍ້ທໍ້ອື່ນ;

3. ມີຄວາມຮູ້, ຄວາມສາມາດ ແລະ ພອນສະຫວັນທາງດ້ານກິລາ;

4. ເຂົ້າຮ່ວມການເຄື່ອນໄຫວກິດຈະກຳ ຝຶກແອບ, ຝຶກຊ້ອມ, ການສະແດງ ແລະ ແຂ່ງຂັນໃນຂັ້ນຕ່າງໆ.

ມາດຕາ 8 ການຈັດຕັ້ງກິລາ-ກາຍຍະກຳທາງສັງຄົມ

**8.1 ສະໂມສອນກິລາ-ກາຍຍະກຳຂັ້ນເມືອງ**

1. ມີການພັດທະນານັກກິລາ, ບຸກຄະລາກອນກິລາ-ກາຍຍະກຳ, ມີໂຄງລ່າງພື້ນຖານ, ວັດຖຸປະກອນ;

2. ເຂົ້າຮ່ວມ ແລະ ຈັດການແຂ່ງຂັນກິລາ-ກາຍຍະກຳລະດັບຕ່າງໆ;
3. ປຸກລະດົມຂົນຂວາຍຊອກແຫຼ່ງທຶນ ເພື່ອການເຄື່ອນໄຫວກິລາ-ກາຍຍະກຳ ໃນສະໂມສອນຂອງຕົນ.

**8.2 ໜ່ວຍກິລາ-ກາຍຍະກຳຂັ້ນຕາແສງ ແລະ ຂັ້ນບ້ານ**

1. ມີການພັດທະນານັກກິລາ, ບຸກຄະລາກອນກິລາ-ກາຍຍະກຳ, ມີໂຄງລ່າງພື້ນຖານ, ວັດຖຸປະກອນ;
2. ເຂົ້າຮ່ວມ ແລະ ຈັດການແຂ່ງຂັນກິລາ-ກາຍຍະກຳລະດັບຕ່າງໆ;
3. ປຸກລະດົມຂົນຂວາຍຊອກແຫຼ່ງທຶນ ເພື່ອການເຄື່ອນໄຫວກິລາ-ກາຍຍະກຳ ໃນໜ່ວຍກິລາຂອງຕົນ.

**ມາດຕາ 9 ມາດຕະຖານ**

ມາດຕະຖານການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ມີ ດັ່ງນີ້:

1. ມີສວນສາທາລະນະ ທີ່ກຳນົດເປັນບ່ອນອອກກຳລັງກາຍຢ່າງໜ້ອຍ 1 ແຫ່ງ;
2. ມີສະໜາມກິລາທີ່ສາມາດຈັດການແຂ່ງຂັນກິລາປະຈຳປີ ຂັ້ນເມືອງ ຢ່າງໜ້ອຍ 1 ແຫ່ງ;
3. ມີເດີ່ນກິລາ ໃນຮົ່ມຢ່າງໜ້ອຍ 1 ແຫ່ງ ແລະ ກາງແຈ້ງຢ່າງໜ້ອຍ 2 ແຫ່ງ;
4. ມີອຸປະກອນຮັບໃຊ້ໃນການຈັດການແຂ່ງຂັນກິລາປະຈຳປີ ຂັ້ນເມືອງ ຢ່າງໜ້ອຍ 3 ປະເພດກິລາຂຶ້ນໄປ;
5. ມີບຸກຄະລາກອນທາງດ້ານກິລາ-ກາຍຍະກຳ, ນັກກິລາຂັ້ນເມືອງ ບໍ່ໃຫ້ຫຼຸດ 5 ປະເພດ ປະເພດລະ 5 ຄົນ, ກຳມະການຕັດສິນ 10 ຄົນ ແລະ ຄູຝຶກກິລາ 10 ຄົນ;
6. ມີການຈັດການແຂ່ງຂັນກິລາ ປະຈຳປີ 5 ປະເພດກິລາຂຶ້ນໄປ, ແຂ່ງຂັນວັນບຸນປະເພນີ 2 ຄັ້ງຕໍ່ປີ ແລະ ແຂ່ງຂັນວັນສຳຄັນຕ່າງໆຂອງຊາດ ແລະ ສາກົນ 3 ຄັ້ງຕໍ່ປີ;
7. ມີມວນຊົນທຸກເພດ-ທຸກໄວ ລວມທັງຄົນພິການເຂົ້າຮ່ວມອອກກຳລັງກາຍ ແລະ ຫຼິ້ນກິລາ ຢ່າງໜ້ອຍອາທິດໜຶ່ງ 3 ຄັ້ງ ໃຊ້ເວລາ 30 ນາທີຂຶ້ນໄປໃຫ້ໄດ້ 20% ຂອງ ພົນລະເມືອງພາຍໃນເມືອງ, ນະຄອນ;
8. ມີສະໂມສອນປະເພດກິລາ-ກາຍຍະກຳຂັ້ນເມືອງ 3 ປະເພດຂຶ້ນໄປ.

## ໝວດທີ 3
## ຂັ້ນຕອນການສ້າງ, ການປະເມີນ ແລະ ການຮັບຮອງ

**ມາດຕາ 10 ຂັ້ນຕອນ ການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ**

ຂັ້ນຕອນ ການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ໃຫ້ປະຕິບັດ ດັ່ງນີ້:

1. ຈັດຕັ້ງໂຄສະນາເຜີຍແຜ່ຂໍ້ຕົກລົງການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ;
2. ນະຄອນຫຼວງວຽງຈັນ, ແຂວງ ຄົ້ນຄ້ວາກຳນົດແຜນເປົ້າໝາຍທີ່ຈະສ້າງເມືອງ, ນະຄອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອກະກຽມສ້າງເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ;
3. ນະຄອນຫຼວງວຽງຈັນ, ແຂວງ ແຕ່ງຕັ້ງຄະນະຮັບຜິດຊອບ, ກະກຽມບັນດາເອກະສານ, ງົບປະມານ ແລະ ປະສານສົມທົບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃນການປະເມີນ ການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ;
4. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ເປົ້າໝາຍທີ່ຈະສ້າງເມືອງ, ເປັນນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ;

5. ສະຫຼຸບ ແລະ ລາຍງານ ການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ໃນແຕ່ລະໄລຍະ ໃຫ້ຂັ້ນເທິງຮັບຊາບເປັນປົກກະຕິ.

**ມາດຕາ 11 ການປະເມີນຜົນ**

ການປະເມີນ ປະກອບມີ ດັ່ງນີ້:

1. ສ້າງເຄື່ອງມືການປະເມີນ;
2. ປະເມີນຜົນ;
3. ສະຫຼຸບການປະເມີນ.

**11.1 ການປະເມີນຜົນ ຂັ້ນກະຊວງສຶກສາທິການ ແລະ ກິລາ**

ການປະເມີນຜົນ ຂັ້ນກະຊວງສຶກສາທິການ ແລະ ກິລາ ການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ 3 ປີຕໍ່ຄັ້ງ.

**11.2 ການປະເມີນຜົນ ຂັ້ນພະແນກສຶກສາທິການ ແລະ ກິລານະຄອນຫຼວງ, ແຂວງ**

ການປະເມີນຜົນ ຂັ້ນພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ແຂວງ, ເມືອງ, ນະຄອນ ການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ປີ ລະ 1 ຄັ້ງ, ພ້ອມທັງລາຍງານຜົນການປະເມີນ ມາຍັງ ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ ເພື່ອຮັບຊາບ.

**ມາດຕາ 12 ການຮັບຮອງ**

ການຮັບຮອງ ການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ມີ ດັ່ງນີ້:

ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ອອກໃບຢັ້ງຢືນຮັບຮອງ ເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ທີ່ຜ່ານການປະເມີນ ແລະ ຄົ້ນຄວ້າຂອງຄະນະກຳມະການຂັ້ນສູນກາງ;

## ໝວດທີ 4
## ຄະນະກຳມະການ

**ມາດຕາ 13 ຄະນະກຳມະການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ**

ຄະນະກຳມະການ ການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ແມ່ນອົງການບໍ່ປະຈຳການ ມີພາລະບົດບາດ ເປັນເສນາທິການໃຫ້ແກ່ຄະນະນຳແຕ່ລະຂັ້ນ ໃນການສ້າງ ແລະ ພັດທະນາການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ, ຄະນະກຳມະການ ປະກອບມີ ດັ່ງນີ້:

1. ຄະນະກຳມະການ ຂັ້ນສູນກາງ;
2. ຄະນະກຳມະການ ຂັ້ນແຂວງ;
3. ຄະນະກຳມະການ ຂັ້ນເມືອງ;
4. ຄະນະກຳມະການ ຂັ້ນຕາແສງ.

ສໍາລັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກໍາມະການ ຂັ້ນສູນກາງ, ຂັ້ນແຂວງ; ຂັ້ນເມືອງ ແລະ ຂັ້ນຕາແສງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 14 ໂຄງປະກອບບຸກຄະລາກອນ ຂອງ ຄະນະກໍາມະການຂັ້ນສູນກາງ**

ໂຄງປະກອບບຸກຄະລາກອນ ຂອງ ຄະນະກໍາມະການຂັ້ນສູນກາງ ມີ ດັ່ງນີ້:

1. ທ່ານ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນປະທານ;
2. ທ່ານ ຫົວໜ້າກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ຮອງປະທານ;
3. ທ່ານ ຮອງຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ ກໍາມະການ;
4. ທ່ານ ຮອງຫົວໜ້າກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ກໍາມະການ, ທັງເປັນຫົວໜ້າກອງເລຂາ;
5. ທ່ານ ຮອງຫົວໜ້າກົມກິລາລະດັບສູງ ກໍາມະການ;
6. ທ່ານ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ກໍາມະການ;
7. ທ່ານ ຮອງຫົວໜ້າກົມການເງິນ ກໍາມະການ;
8. ທ່ານ ຮອງຫົວໜ້າກົມປະກັນຄຸນນະພາບການສຶກສາ ກໍາມະການ;
9. ທ່ານ ຮອງຫົວໜ້າກົມກວດກາ ກໍາມະການ;
10. ທ່ານ ຜູ້ຕາງໜ້າກົມແຂ່ງຂັນ ແລະ ຍ້ອງຍໍ ຄະນະຈັດຕັ້ງສູນກາງພັກ ກໍາມະການ;
11. ທ່ານ ຫົວໜ້າພະແນກ ຂອງ ບັນດາກົມທີ່ກ່ຽວຂ້ອງ ກໍາມະການ.

ໂຄງປະກອບບຸກຄະລາກອນ ຂອງ ຄະນະກໍາມະການຂັ້ນສູນກາງ ນອກຈາກທີ່ໄດ້ກໍານົດເບື້ອງເທິງນີ້ແລ້ວ, ຖ້າຫາກມີຄວາມຈໍາເປັນໃນແຕ່ລະໄລຍະ ແມ່ນໄດ້ຮັບການແຕ່ງຕັ້ງເພີ່ມຕື່ມ ໂດຍການພິຈາລະນາຕົກລົງຂອງ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕາມການສະເໜີ ຂອງ ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ.

ສະມາຊິກຂອງຄະນະກໍາມະການ ຈະໄດ້ຮັບນະໂຍບາຍໃນການເຄື່ອນໄຫວວຽກງານຕາມລະບຽບການ ທີ່ກະຊວງການເງິນວາງອອກ.

**ມາດຕາ 15 ໂຄງປະກອບບຸກຄະລາກອນ ຂອງຄະນະກໍາມະການຂັ້ນແຂວງ**

ໂຄງປະກອບບຸກຄະລາກອນ ຂອງຄະນະກໍາມະການຂັ້ນແຂວງ ປະກອບ ມີ ດັ່ງນີ້:

1. ທ່ານ ຮອງປະທານຄະນະກໍາມະການປົກຄອງນະຄອນຫຼວງ, ແຂວງ ເປັນປະທານ;
2. ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລານະຄອນຫຼວງ, ແຂວງ ຮອງປະທານ;
3. ທ່ານ ຮອງຫົວໜ້າຫ້ອງວ່າການນະຄອນຫຼວງ, ແຂວງ ກໍາມະການ;
4. ທ່ານ ຮອງຫົວໜ້າຄະນະຈັດຕັ້ງນະຄອນຫຼວງ, ແຂວງ ກໍາມະການ;
5. ທ່ານ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລານະຄອນຫຼວງ, ແຂວງ ກໍາມະການ, ທັງເປັນຫົວໜ້າກອງເລຂາ;
6. ທ່ານ ຫົວໜ້າຂະແໜງກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ກໍາມະການ;
7. ທ່ານ ຫົວໜ້າຂະແໜງການທີ່ກ່ຽວຂ້ອງ ກໍາມະການ.

ໂຄງປະກອບບຸກຄະລາກອນ ຂອງ ຄະນະກຳມະການຂັ້ນແຂວງ ນອກຈາກທີ່ໄດ້ກຳນົດເບື້ອງເທິງນີ້ແລ້ວ, ຖ້າຫາກມີຄວາມຈຳເປັນໃນແຕ່ລະໄລຍະ ແມ່ນໄດ້ຮັບການແຕ່ງຕັ້ງເພີ່ມຕື່ມ ໂດຍການພິຈາລະນາຕົກລົງ ຂອງ ປະທານຄະນະກຳມະການຂັ້ນແຂວງ ຕາມການສະເໜີຂອງຫົວໜ້າພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ແຂວງ.

ສະມາຊິກຂອງຄະນະກຳມະການຂັ້ນແຂວງ ຈະໄດ້ຮັບນະໂຍບາຍ ໃນການເຄື່ອນໄຫວວຽກງານຕາມລະບຽບການທີ່ກະຊວງການເງິນວາງອອກ.

**ມາດຕາ 16 ໂຄງປະກອບບຸກຄະລາກອນ ຂອງຄະນະກຳມະການຂັ້ນເມືອງ**

ໂຄງປະກອບບຸກຄະລາກອນ ຂອງຄະນະກຳມະການຂັ້ນເມືອງ ປະກອບ ມີ ດັ່ງນີ້:

1. ທ່ານ ຮອງປະທານຄະນະກຳມະການປົກຄອງເມືອງ, ນະຄອນ ເປັນປະທານ;
2. ທ່ານ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ຮອງປະທານ;
3. ທ່ານ ຮອງຫົວໜ້າຫ້ອງວ່າການເມືອງ, ນະຄອນ ກຳມະການ;
4. ທ່ານ ຮອງຫົວໜ້າຫ້ອງການຄະນະຈັດຕັ້ງເມືອງ, ນະຄອນ ກຳມະການ;
5. ທ່ານ ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ກຳມະການ, ທັງເປັນ ຫົວໜ້າກອງເລຂາ;
6. ທ່ານ ຫົວໜ້າໜ່ວຍງານ ຂອງບັນດາຫ້ອງການທີ່ກ່ຽວຂ້ອງ ກຳມະການ.

ໂຄງປະກອບບຸກຄະລາກອນ ຂອງຄະນະກຳມະການຂັ້ນເມືອງ ນອກຈາກທີ່ໄດ້ກຳນົດເບື້ອງເທິງນີ້ແລ້ວ, ຖ້າຫາກມີຄວາມຈຳເປັນໃນແຕ່ລະໄລຍະ ແມ່ນໄດ້ຮັບການແຕ່ງຕັ້ງເພີ່ມຕື່ມໂດຍການພິຈາລະນາຕົກລົງ ຂອງ ປະທານຄະນະກຳມະການປົກຄອງເມືອງ, ນະຄອນ ຕາມການສະເໜີ ຂອງ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ.

ສະມາຊິກຂອງຄະນະກຳມະການຂັ້ນເມືອງ ຈະໄດ້ຮັບນະໂຍບາຍໃນການເຄື່ອນໄຫວວຽກງານຕາມລະບຽບການທີ່ກະຊວງການເງິນວາງອອກ.

**ມາດຕາ 17 ໜ້າທີ່ ແລະ ຂອບເຂດສິດ ຂອງ ຄະນະກຳມະການຂັ້ນສູນກາງ**

ໜ້າທີ່ ແລະ ຂອບເຂດສິດ ຂອງ ຄະນະກຳມະການ ຂັ້ນສູນກາງ ມີ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນພັດທະນາ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງ;
2. ຄົ້ນຄ້ວາ ສ້າງ, ປັບປຸງນິຕິກຳ ແລະ ລະບຽບການ ກ່ຽວກັບການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ;
3. ສ້າງແຜນການ, ແຜນງານ ໂຄງການ ໃນການລົງຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ເປັນແຕ່ລະໄລຍະ;
4. ໂຄສະນາເຜີຍແຜ່ບັນດານິຕິກຳ ແລະ ລະບຽບການ ກ່ຽວກັບການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ໃຫ້ຂັ້ນແຂວງ;
5. ຊຸກຍູ້, ສົ່ງເສີມ ການຈັດຕັ້ງປະຕິບັດ ສ້າງເມືອງ, ນະຄອນ ຕົວແບບດ້ານກິລາ-ກາຍຍະກຳມວນຊົນ ຕາມເງື່ອນໄຂ ແລະ ມາດຕະຖານໃນແຕ່ລະປີ;

6. ຕິດຕາມ, ກວດກາ, ປະເມີນຜົນ ແລະ ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ພ້ອມທັງສະຫຼຸບລາຍງານໃຫ້ຂັ້ນເທິງຊາບແຕ່ລະໄລຍະ;

7. ຈັດກອງປະຊຸມຄົ້ນຄວ້າ ຮັບຮອງຜົນຂອງການປະເມີນສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ;

8. ສະເໜີການຍ້ອງຍໍ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ;

9. ປະສານສົມທົບກັບຂັ້ນແຂວງໃນການຈັດພິທີປະກາດຮັບຮອງ ແລະ ເປີດປ້າຍ ຕົວແບບດ້ານກິລາ-ກາຍຍະກຳມວນຊົນຂອງ ເມືອງ, ນະຄອນ;

10. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ;

11. ສະຫຼຸບລາຍງານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;

12. ປະຕິບັດໜ້າທີ່ ແລະ ນຳໃຊ້ສິດອື່ນ ຕາມການມອບໝາຍ.

**ມາດຕາ 18 ໜ້າທີ່ ແລະ ຂອບເຂດສິດ ຂອງ ຄະນະກຳມະການຂັ້ນແຂວງ**

ໜ້າທີ່ ແລະ ຂອບເຂດສິດ ຂອງ ຄະນະກຳມະການຂັ້ນແຂວງ ມີດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນພັດທະນາ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງ;

2. ສ້າງແຜນການ, ແຜນງານ ໂຄງການ ໃນການລົງຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ເປັນແຕ່ລະໄລຍະ;

3. ໂຄສະນາເຜີຍແຜ່ບັນດານິຕິກຳ ແລະ ລະບຽບການ ກ່ຽວກັບການສ້າງເມືອງ, ນະຄອນ_ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ໃຫ້ຂັ້ນເມືອງ;

4. ຊຸກຍູ້, ສົ່ງເສີມ ການຈັດຕັ້ງປະຕິບັດ ສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ຕາມເງື່ອນໄຂ ແລະ ມາດຕະຖານໃນແຕ່ລະປີ;

5. ຕິດຕາມ, ກວດກາ, ປະເມີນຜົນ ແລະ ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດການສ້າງເມືອງ, ນະຄອນ ຕົວແບບດ້ານກິລາ-ກາຍຍະກຳມວນຊົນ ພ້ອມທັງສະຫຼຸບລາຍງານໃຫ້ຂັ້ນເທິງຊາບແຕ່ລະໄລຍະ;

6. ຈັດກອງປະຊຸມຄົ້ນຄວ້າ ຮັບຮອງຜົນການປະເມີນສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ;

7. ປະສານສົມທົບກັບ ຄະນະກຳມະການຂັ້ນເມືອງ, ນະຄອນ ໃນການຈັດພິທີປະກາດຮັບຮອງ ແລະ ເປີດປ້າຍເປັນເມືອງ, ນະຄອນ ຕົວແບບດ້ານກິລາ-ກາຍຍະກຳມວນຊົນ;

8. ສະເໜີການຍ້ອງຍໍ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ;

9. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ;

10.ສະຫຼຸບລາຍງານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;

11.ປະຕິບັດໜ້າທີ່ ແລະ ນຳໃຊ້ສິດອື່ນ ຕາມການມອບໝາຍ.

**ມາດຕາ 19 ໜ້າທີ່ ແລະ ຂອບເຂດສິດ ຂອງ ຄະນະກຳມະການຂັ້ນເມືອງ**

ໜ້າທີ່ ແລະ ຂອບເຂດສິດ ຂອງ ຄະນະກຳມະການຂັ້ນເມືອງ ມີດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນພັດທະນາ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງ;
2. ສ້າງແຜນການ, ແຜນງານ ໂຄງການ ໃນການລົງຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ເປັນແຕ່ລະໄລຍະ;
3. ໂຄສະນາເຜີຍແຜ່ບັນດານິຕິກຳ ແລະ ລະບຽບການ ກ່ຽວກັບການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ໃຫ້ບັນດາຫ້ອງການ, ອົງການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ແລະ ສັງຄົມ ພາຍໃນເມືອງ;
4. ຊຸກຍູ້, ສົ່ງເສີມ ການຈັດຕັ້ງປະຕິບັດ ສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ຕາມເງື່ອນໄຂ ແລະ ມາດຕະຖານໃນແຕ່ລະປີ;
5. ຕິດຕາມ, ກວດກາ, ປະເມີນຜົນ ແລະ ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ ພ້ອມທັງສະຫຼຸບລາຍງານໃຫ້ຂັ້ນເທິງຊາບແຕ່ລະໄລຍະ;
6. ຈັດພິທີປະກາດຮັບຮອງ ແລະ ເປີດປ້າຍ ເປັນເມືອງ, ນະຄອນ ຕົວແບບດ້ານກິລາ-ກາຍຍະກຳມວນຊົນ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບການສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳມວນຊົນ;
8. ສະເໜີການຍ້ອງຍໍ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ;
9. ສະຫຼຸບລາຍງານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;
10. ປະຕິບັດໜ້າທີ່ ແລະ ນຳໃຊ້ຂອບເຂດສິດອື່ນ ຕາມການມອບໝາຍ.

## ໝວດທີ 5
## ການຍ້ອງຍໍ

**ມາດຕາ 20 ເປົ້າໝາຍການຍ້ອງຍໍ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 21 ລະດັບການຍ້ອງຍໍ**

ລະດັບການຍ້ອງຍໍ ມີ ດັ່ງນີ້:

1. ຂັ້ນລັດຖະບານ;
2. ຂັ້ນກະຊວງສຶກສາທິການ ແລະ ກິລາ;
3. ຂັ້ນແຂວງ;
4. ຂັ້ນເມືອງ.

**ມາດຕາ 22 ການປະຕິບັດການຍ້ອງຍໍ**

ການປະຕິບັດການຍ້ອງຍໍ ມີ ດັ່ງນີ້:

1. ປະຕິບັດໄດ້ຄົບຕາມເງື່ອນໄຂ ແລະ ມາດຕະຖານ 1 ປີ ສະເໜີ ຂໍໃບຍ້ອງຍໍຂັ້ນເມືອງ, ນະຄອນ;
2. ປະຕິບັດໄດ້ຄົບຕາມເງື່ອນໄຂ, ມາດຕະຖານ ແລະ ໄດ້ຮັບໃບຍ້ອງຍໍຂັ້ນເມືອງ 2 ປີຕິດຕໍ່ກັນສະເໜີ ຂໍໃບຍ້ອງຍໍຂັ້ນແຂວງ;
3. ປະຕິບັດໄດ້ຄົບຕາມເງື່ອນໄຂ, ມາດຕະຖານ ແລະ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ 3 ປີຕິດຕໍ່ກັນ, ສະເໜີຂໍໃບຍ້ອງຍໍ ຂັ້ນກະຊວງພ້ອມທັງໄຂ ແລະ ຂຶ້ນປ້າຍຈັດພິທີປະກາດ ເປັນຕົວແບບດ້ານກິລາ-ກາຍຍະກຳ ມວນຊົນ ຂັ້ນເມືອງ;
4. ປະຕິບັດໄດ້ຄົບຕາມມາດຕະຖານ, ເງື່ອນໄຂ ແລະ ໄດ້ຮັບໃບຍ້ອງຍໍ ຈາກກະຊວງ 4 ປີຕິດຕໍ່ກັນ ສະເໜີ ຂໍການຍ້ອງຍໍຂັ້ນລັດຖະບານ;
5. ປະຕິບັດໄດ້ຄົບຕາມມາດຕະຖານ, ເງື່ອນໄຂຕະຫຼອດໄລຍະ 5 ປີ, ສະເໜີຂໍຫຼຽນກາແຮງງານ;
6. ປະຕິບັດໄດ້ຄົບຕາມມາດຕະຖານ, ເງື່ອນໄຂຕະຫຼອດໄລຍະ 6 ປີຂຶ້ນໄປ, ສະເໜີຂໍຫຼຽນໄຊແຮງງານ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 23 ງົບປະມານ**

ງົບປະມານຮັບໃຊ້ການຈັດຕັ້ງປະຕິບັດວຽກງານສ້າງເມືອງ, ນະຄອນ ເປັນຕົວແບບດ້ານກິລາ-ກາຍຍະກຳ ມວນຊົນ ແມ່ນນຳໃຊ້ງົບປະມານຂອງລັດ ແລະ ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ທາງສັງຄົມ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 24 ການເຜີຍແຜ່**

ມອບໃຫ້ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ສົມທົບກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງ ເຜີຍແຜ່ຂໍ້ຕົກລົງສະບັບນີ້ ແລະ ໂຄສະນາ, ເຜີຍແຜ່ໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບຢ່າງທົ່ວເຖິງ.

**ມາດຕາ 25 ການຈັດຕັ້ງປະຕິບັດ**

ຫ້ອງການກະຊວງ, ບັນດາກົມ, ສະຖາບັນ, ສູນ, ສຳນັກພິມສຶກສາ ແລະ ກິລາ, ພະແນກສຶກສາທິການ ແລະ ກິລານະຄອນຫຼວງ, ແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ ແລະ ພາກສ່ວນທີ່ ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 26 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງສຶກສາທິການ ແລະ ກິລາ ★ ລັດຖະມົນຕີ ★

ທອງສະລິດ ມັງໜໍ່ເມກ